ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ : 114 /ພກພ

ນະຄອນຫລວງວຽງຈັນ, ວັນທີ : 28/10/2020

ໜັງສືລາຍງານ

ຮຽນ : ທ່ານ ຜູ້ອຳນວຍການໃຫຍ່ ຕະຫລາດຫລັກຊັບລາວ

ຮຽນ : ທ່ານ ຫົວໜ້າ ສຳນັກງານຄະນະກຳມະການ ຄຸມຄອງຫລັກຊັບ

ເລື່ອງ: ການລາຍງານກ່ຽວກັບການເປີດເຜີຍຂໍ້ມູນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນການຂຸດຄົ້ນ ທ່າແຮງການສ້າງລາຍຮັບ ແລະ ການຂະຫຍາຍຖານລູກຄ້າເປົ້າໝາຍ.

- ອີງຕາມໜັງສືສະເໜີຂອງ ຕະຫລາດຫລັກຊັບລາວ ເລກທີ 668/ຕລຊລ ລົງວັນທີ 15 ຕຸລາ 2020.
- ອີງຕາມບົດບັນທຶກວິທີ ແລະ ກຳນົດເວລາການແກ້ໄຂບັນຫາຕ່າງໆໃຫ້ແກ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເລກທີ 470/ຕລຊລ ລົງວັນທີ 29 ກໍລະກົດ 2020.

ຂ້າພະເຈົ້າ, ໃນນາມຜູ້ອຳນວຍການ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂໍອະນຸຍາດ ລາຍງານລາຍລະອຽດການຈັດຕັ້ງປະຕິບັດແຜນການຂຸດຄົ້ນທ່າແຮງການສ້າງລາຍຮັບ ແລະ ແຜນການຂະຫຍາຍຖານລູກຄ້າ ດັ່ງຕໍ່ລົງໄປນີ້:

I. ແຜນລາຍຮັບໄລຍະສັ້ນໃນປີ 2020

ກ. (ເຈົ້າຂອງໂຄງການ ລັດຖະບານ)

1. ໂຄງການກໍ່ສ້າງທາງຍີກລະດັບທາງປູຫີນແຮ່ ແຕ່ ບ້ານກົ່ວເຈຍ ຫາ ບ້ານເມືອງຮຶບ ເມືອງໂພນທອງ, ແຂວງຫຼວງພະບາງ ມູນຄ່າ 10.000.000.000 ກີບ.
2. ໂຄງການກໍ່ສ້າງທາງປູຢາງສອງຊັ້ນ ແລະຂົວເບຕົ້ງເສີມເຫຼັກ 6 ແຫ່ງ ແຕ່ ບ້ານອຸ(ເມືອງຫຼວງພະບາງ) ຫາ ບ້ານສີບຸນເຮືອງ(ເມືອງນານ), ແຂວງຫຼວງພະບາງ ມູນຄ່າ 15.000.000.000 ກີບ.
3. ໂຄງການສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ເໜືອ ຊ່ວງແຕ່ ບ້ານກົກຍົ້ວ ຫາ ບ້ານພອນໄຊ ມູນຄ່າ 4.000.000.000 ກີບ.
4. ໂຄງການສ້ອມແປງທາງຫຼວງແຫ່ງຊາດ ເລກທີ 1 C ແຂວງຫຼວງພະບາງ, ຊ່ວງແຕ່ ເມືອງງອຍ ຫາ ຊາຍແດນ ເມືອງວຽງຄຳ ມູນຄ່າ 500.000.000 ກີບ
5. ໂຄງການສ້ອມແປງທາງຫຼວງແຫ່ງຊາດ ເລກທີ 17A ແຂວງຫຼວງນ້ຳທາ, ຊ່ວງແຕ່ ເມືອງຫຼວງນ້ຳທາ ຫາ ເມືອງສີງ(ດ່ານປາງໄຮ) ມູນຄ່າ 700.000.000 ກີບ

II. ແຜນລາຍຮັບໄລຍະກາງໃນປີ 2021

ກ. (ເຈົ້າຂອງໂຄງການ ລັດຖະບານ)

1. ໂຄງການກໍ່ສ້າງທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ ສີງເປືອຍ ຫາ ໂພນໂຮງ ລວງຍາວ 5 ກມ ມູນຄ່າ 4.500.000.000 ກີບ(ຮັບເໝົາຕໍ່ຈາກບໍລິສັດຈີນ)
2. ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນໄລຍະທີ 2 ຢຸ່ນະຄອນຫຼວງວຽງຈັນ ລວງຍາວ 8.3 ກມ(ຮັບເໝົາຕໍ່ຈາກເກົາຫລີ)
3. ໂຄງການກໍ່ສ້າງທາງຢຸ່ເຂດເສດຖະກິດພິເສດແຂວງຫຼວງພະບາງ ຮັບເໝົາຕໍ່ຈາກບໍລິສັດພູສີກຸບຮ່ວມກັບບໍລິສັດ ເມກາ ຫົງກົງ

ຂ. (ເຈົ້າຂອງໂຄງການ ເອກະຊົນ)

1. ໂຄງການບ້ານຈັດສັນໄລຍະແລກ 200 ຫລັງ.
2. ຮັບເໝົາຕໍ່ຊ່ວງກັບພູສີກຸບ ໂຄງການກໍ່ສ້າງພື້ນຖານໂຄງລາງ ເຂດເສດຖະກິດພິເສດ S2 ຊ່ວງທຳອິດ ມູນຄ່າ 2,5 ລ້ານ ໂດລາ

III. ແຜນລາຍຮັບໄລຍະຍາວໃນປີ 2022-2024

ກ. (ເຈົ້າຂອງໂຄງການ ລັດຖະບານ)

1. ໂຄງການກໍ່ສ້າງທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ ສີງເປືອຍ ຫາ ໂພນໂຮງ ລວງຍາວ 5 ກມ ມູນຄ່າ 4.500.000.000 ກີບ(ຮັບເໝົາຕໍ່ຈາກບໍລິສັດຈີນ)
2. ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນໄລຍະທີ 2 ຢຸ່ນະຄອນຫຼວງວຽງຈັນ ລວງຍາວ 8.3 ກມ(ຮັບເໝົາຕໍ່ຈາກເກົາຫລີ)

ຂ. (ເຈົ້າຂອງໂຄງການ ເອກະຊົນ)

1. ໂຄງການກໍ່ສ້າງທາງຢຸ່ເຂດເສດຖະກິດພິເສດແຂວງຫຼວງພະບາງ ຮັບເໝົາຕໍ່ຈາກບໍລິສັດພູສີກຸບຮ່ວມກັບບໍລິສັດ ເມກາ ຫົງກົງ
2. ໂຄງການບ້ານຈັດສັນໄລຍະສອງ 200 ຫລັງ.
3. ໂຄງການກໍ່ສ້າງທາງດ່ວນວຽງຈັນ-ປາກເຊ, ຊ່ວງທີ 3 ລວງຍາວ 128 ກມ (ແຕ່ ເຊໂນ ແຂວງສະຫວັນນະເຂດ ຫາ ນາປ໋ງ ແຂວງສາລະວັນ)
4. ຮັບເໝົາຕໍ່ຊ່ວງກັບພູສີກຸບ ໂຄງການກໍ່ສ້າງພື້ນຖານໂຄງລາງ ເຂດເສດຖະກິດພິເສດ S2 ຊ່ວງສຸດທ້າຍ ມູນຄ່າ 7 ລ້ານ ໂດລາ.

ດັ່ງນັ້ນ, ຈຶ່ງໄດ້ລາຍງານມາຍັງທ່ານເພື່ອຮັບຊາບ.

ອຳນວຍການ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສີທາ ພົມມະຈິດ